# ໂອກາດທີ່ສະເໝີພາບແມ່ນລະບຽບກົດໝາຍ

ຖືວ່າເປັນເລື່ອງຜິດກົດໝາຍ ຖ້າວ່າຜູ້ທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນຂອງຣັຖບານກາງ ໄດ້ຮັບການຈຳແນກບົນພື້ນຖານດັ່ງຕໍ່ໄປນີ້: ເປັນການຕໍ່ຕ້ານຂອງແຕ່ລະບຸກຄົນໃນສະຫະຣັຖ ບົນພື້ນຖານຂອງເຊື້ອຊາດ, ສີຜິວ, ສາສະໜາ, ເພດ (ລວມທັງ: ການຖືພາ, ການເກີດລູກ ແລະ ເງື່ອນໄຂດ້ານການແພດທີ່ກ່ຽວຂ້ອງ, ການເປັນຕົວແບບທາງເພດ, ສະພາບຂອງການເປັນຜູ້ທີ່ມີການປ່ຽນເບນທາງເພດ, ແລະ ຄວາມປະພຶດທາງເພດ), ຊາດກຳເນີດ (ລວມທັງທັກສະພາສາອັງກິດທີ່ມີຈຳກັດ), ອາຍຸ, ຄວາມເປັນຄົນພິການ, ຫຼື ເຄືອຂ່າຍ ຫຼື ຄວາມເຊື່ອດ້ານການເມືອງ, ຫຼື ຕໍ່ຕ້ານຜົນປະໂຫຍດ, ຜູ້ສະໝັກ ຫຼື ການເຂົ້າຮ່ວມໂຄງການທີ່ໃຫ້ການຊ່ວຍເຫຼືອດ້ານການເງິນພາຍໃຕ້ ຫົວຂໍ້ I ຂອງກົດໝາຍວ່າດ້ວຍການປ່ຽນແປງແຮງງານ ແລະ ກາລະໂອກາດ (Workforce Innovation and Opportunity Act - WIOA) ບົນພື້ນຖານຂອງສະພາບຂອງການເປັນພົນລະເມືອງຂອງບຸກຄົນ ຫຼື ການເຂົ້າຮ່ວມໃນ ຫົວຂໍ້ I - ໂຄງການ ຫຼື ກິດຈະກຳທີ່ໃຫ້ການຊ່ວຍເຫຼືອດ້ານການເງິນຂອງ WIOA.

ຜູ້ໄດ້ຮັບຕ້ອງບໍ່ຖືກຈຳແນກໃນຂົງເຂດດັ່ງຕໍ່ໄປນີ້: ຕັດສິນວ່າຜູ້ໃດຈະຮັບເຂົ້າ ຫຼື ເຂົ້າຮ່ວມໂຄງການ ຫຼື ກິດຈະກຳຊ່ວຍເຫຼືອດ້ານການເງິນໃດໜຶ່ງໃນ ຫົວຂໍ້ I ຂອງ WIOA; ໃຫ້ໂອກາດ ຫຼື ເຮັດກັບບຸກຄົນໃດກໍ່ຕາມກ່ຽວກັບໂຄງການ ຫຼື ກິດຈະກຳດັ່ງກ່າວ; ຫຼື ຕັດສິນກ່ຽວກັບການວ່າຈ້າງໃນການເຂົ້າບໍລິຫານ ຫຼື ກ່ຽວກັບໂຄງການ ຫຼື ກິດຈະກຳດັ່ງກ່າວ.

ຜູ້ໄດ້ຮັບການຊ່ວຍເຫຼືອດ້ານການເງິນຂອງຣັຖບານກາງ ຕ້ອງປະຕິບັດຕາມຂັ້ນຕອນທີ່ສົມເຫດສົມຜົນໃນການຮັບປະກັນວ່າການສື່ສານກັບບຸກຄົນທີ່ມີຄວາມພິການ ມີປະສິດທິຜົນເທົ່າກັບການສື່ສານກັບຄົນອື່ນ. ນີ້ໝາຍຄວາມວ່າ ຖ້າວ່າມີການຮຽກຮ້ອງ ແລະ ບໍ່ມີການເກັບຄ່າໃຊ້ຈ່າຍກັບບຸກຄົນດັ່ງກ່າວ, ຜູ້ໄດ້ຮັບ ຕ້ອງໃຫ້ຄວາມຊ່ວຍເຫຼືອ ແລະ ໃຫ້ບໍລິການເສີມແກ່ຜູ້ທີ່ເປັນຄົນພິການທີ່ສົມຄວນຈະໄດ້ຮັບສິດ.

## ທ່ານຈະເຮັດແນວໃດຖ້າທ່ານເຊື່ອວ່າທ່ານຖືກຈຳແນກ

ຖ້າທ່ານຄິດວ່າ ທ່ານຖືກຈຳແນກພາຍໃຕ້ໂຄງການ ຫຼື ກິດຈະກຳກ່ຽວກັບການຊ່ວຍເຫຼືອດ້ານການເງິນ - ຫົວຂໍ້ I ຂອງ WIOA, ທ່ານສາມາດປະກອບເອກະສານຮ້ອງຮຽນພາຍໃນ 180 ວັນ ນັບຈາກວັນທີທີ່ຢືນຢັນວ່າໄດ້ຮັບການລະເມີດ: ເຈົ້າໜ້າທີ່ໃຫ້ໂອກາດທີ່ສະເໝີພາບ (Equal Opportunity Officer) ຂອງຜູ້ຮັບ (ຫຼື ບຸກຄົນທີ່ຜູ້ໄດ້ຮັບໄດ້ມອບໝາຍເພື່ອຈຸດປະສົງນີ້);

<u>ເຈົ້າໜ້າທີ່ໃຫ້ໂອກາດທີ່ສະເໝີພາບ (EO) ປະຈຳເຂດທ້ອງຖິ່ນ:</u>

<u>ພະນັກງານ EO ຂອງ WIOA:</u> Karen Lilledahl, DEED, Office of Diversity & Equal Opportunity, 1st National Bank Building, 332 Minnesota Street E200, St. Paul, MN 55101, 651-259-7089 (ສຽງ), 651-297-5343 (ແຟັກ), Karen.Lilledahl@state.mn.us

ຫຼື

<u>ພະນັກງານ EO ຂອງຣັຖ:</u> Heather Stein, DEED, Office of Diversity & Equal Opportunity, 1st National Bank Building, 332 Minnesota Street E200, St. Paul, MN 55101, 651-259-7097 (ສຽງ), 651-297-5343 (ແຟັກ), Heather.Stein@state.mn.us

**Director, Civil Rights Center (CRC), U.S. Department of Labor**
**200 Constitution Avenue NW, Room N-4123, Washington, DC 20210** ຫຼື
ສິ່ງທາງອິນເຕີເນັດຕາມຄຳແນະນຳຢູ່ເວັບໄຊທ໌ຂອງ CRC ທີ່ www.dol.gov/crc.

ຖ້າທ່ານປະກອບເອກະສານຮ້ອງຮຽນຂອງທ່ານໄປຫາຜູ້ຮັບ, ທ່ານຕ້ອງລໍຖ້າຈົນກວ່າ ຜູ້ຮັບອອກແຈ້ງການເຄື່ອນໄຫວຂັ້ນສຸດທ້າຍ (Notice of Final Action) ແບບເປັນລາຍລັກອັກສອນ, ຫຼືຈົນກວ່າ ຫຼັງຈາກເວລາຜ່ານໄປ 90 ວັນ (ເຫດການໃດກໍ່ຕາມທີ່ເກີດຂຶ້ນກ່ອນ), ກ່ອນຈະປະກອບເອກະສານໄປຫາສູນສິດທິຂອງພົນລະເມືອງ (Civil Rights Center - CRC) (ເບິ່ງທີ່ຢູ່ຂ້າງເທິງ). ຖ້າວ່າຜູ້ຮັບ ບໍ່ຊຽນແຈ້ງການເຄື່ອນໄຫວເປັນລາຍລັກອັກສອນໄປຫາທ່ານ ພາຍໃນ 90 ວັນ ນັບຈາກວັນທີທີ່ທ່ານປະກອບເອກະສານຮ້ອງຮຽນ, ທ່ານສາມາດປະກອບເອກະສານຮ້ອງຮຽນໄປຫາ CRC ກ່ອນຈະໄດ້ຮັບແຈ້ງການສະບັບນັ້ນ. ເຖິງຢ່າງໃດກໍ່ຕາມ, ທ່ານຕ້ອງປະກອບເອກະສານຮ້ອງຮຽນໄປຫາ CRC ຂອງທ່ານພາຍໃນ 30 ວັນ ຢູ່ໃນກຳນົດເສັ້ນຕາຍ 90 ວັນ (ຖ້າບໍ່ດັ່ງນັ້ນ, ພາຍໃນ 120 ວັນ ຫຼັງຈາກວັນທີທີ່ທ່ານປະກອບເອກະສານຮ້ອງຮຽນຂອງທ່ານໄປຫາຜູ້ຮັບ). ຖ້າຫາກຜູ້ຮັບ ເຮັດແຈ້ງການເຄື່ອນໄຫວຄັ້ງສຸດທ້າຍແບບເປັນລາຍລັກອັກສອນໄປຫາທ່ານເມື່ອທ່ານຮ້ອງຮຽນ, ແຕ່ວ່າທ່ານບໍ່ພໍໃຈກັບຄຳຕັດສິນ ຫຼື ວິທີແກ້ໄຂບັນຫາ, ທ່ານສາມາດປະກອບເອກະສານຮ້ອງຮຽນໄປຫາ CRC. ທ່ານຕ້ອງປະກອບເອກະສານຮ້ອງຮຽນໄປຫາ CRC ຂອງທ່ານພາຍໃນ 30 ວັນ ນັບຈາກວັນທີທີ່ທ່ານໄດ້ຮັບແຈ້ງການເຄື່ອນໄຫວຄັ້ງສຸດທ້າຍ.